# ບໍລິການກວດ-ປິ່ນປົວພະຍາດຢູ່ແຂວງອຸດົມໄຊ



ຄະນະແພດໂຮງໝໍແຂວງອຸດົມໄຊ ແລະ ມູນນິທິຟື້ນຟູສຸຂະພາບລາວ (LRF) ເຄື່ອນໄຫວບໍລິການກວດ ແລະ ປິ່ນປົວພະຍາດແຂ້ວຫູ-ດັງ-ຄໍ ຕາ ແມ່ມານ ແລະ ເດັກນ້ອຍ ຢູ່ສຸກສາລານ້ຳແຫງ ແລະ ຕາງກົກ ເມືອງໄຊ ແຂວງອຸດົມໄຊ ວັນທີ 6-13 ກຸມພາ 2018 ເພື່ອແນໃສ່ຫຼຸດຜ່ອນອັດຕາແຜ່ກະຈາຍຂອງພະຍາດຫູໜວກ ແຂ້ວແມງ ຕາບອດ ແລະ ອັດຕາການຕາຍຂອງແມ່ມານ ແລະ ເດັກນ້ອຍ ເຮັດໃຫ້ການບໍລິການຮັກສາສຸຂະພາບໃຫ້ທົ່ວເຖິງຂອບເຂດຊົນນະບົດຫ່າງໄກສອກຫຼີກ ທັງແນໃສ່ປັບປຸງການບໍລິການຢູ່ສຸກສາລາໃຫ້ດີຂຶ້ນ ໂດຍການສະໜອງເຄື່ອງມືອຸປະກອນການແພດທີ່ຂາດເຂີນ ແລະ ຈຳເປັນໃຫ້ສຸກສາລາ.

ຄັ້ງນີ້ເປັນຄັ້ງທີ 8 ທີ່ຄະນະແພດດັ່ງກ່າວໄດ້ເຄື່ອນໄຫວຢູ່ຂັ້ນສຸກສາລາທີ່ຂຶ້ນກັບແຂວງອຸດົມໄຊ ເພື່ອແນໃສ່ຊ່ວຍກວດ ແລະ ປິ່ນປົວພະຍາດໃຫ້ປະຊາຊົນຢູ່ເຂດຊົນນະບົດໂດຍບໍ່ຈຳແນກເພດ ອາຍຸ ຊົນເຜົ່າ ແລະ ສາສະໜາ ເຊິ່ງຄັ້ງນີ້ໄດ້ບໍລິການກວດ ແລະ ປິ່ນປົວ 739 ຄົນ ໃນນີ້ ພະຍາດແຂ້ວ 116 ຄົນ ພະຍາດຫູ-ດັງ-ຄໍ120 ຄົນ ພະຍາດຕາ 215 ຄົນ ຜ່າຕັດແກ່ນຕາຂຸ່ນ 9 ຄົນ ກວດແມ່ມານ 28 ຄົນ ພະຍາດເດັກນ້ອຍ 110 ຄົນ ປ້ອງກັນແຂ້ວແມງ ໂດຍການສອນວິທີຖູແຂ້ວ ແຈກຢາຍໄມ້ ແລະ ຢາຖູແຂ້ວ ແລະ ອຸປະກອນການຮຽນໃຫ້ເດັກນ້ອຍນັກຮຽນປະຖົມ 150 ຄົນ ສ່ວນອຸປະກອນການແພດທີ່ນຳມາຊ່ວຍເຫຼືອ 2 ສຸກສາລາ ດັ່ງກ່າວມີ Blood pressure Small surgery set Delivery set Temperature Fetal Doppler Head light Plastic tapemetric Autoclave Sterilizer Nebulizer ແລະ Weight scale (enfant) ການບໍລິການທັງໝົດແມ່ນບໍ່ໄດ້ເສຍຄ່າ ແລະ ໃຫ້ການຊ່ວຍເຫຼືອເຄື່ອງອຸປະກອນການແພດຄັ້ງນີ້ ໂດຍໄດ້ຮັບທຶນ LRF ສະຫະລັດອາເມຣິກາ ແລະ ທຶນສົມທົບປິ່ນປົວຕາຈາກມູນນິທິເຟຼດໂຮໂລ ອົດສະຕຣາລີ ມູນຄ່າ 13.488 ໂດລາສະຫະລັດ ຫຼື ປະມານ 111,58 ລ້ານກີບ.

LRF ມີສຳນັກງານໃຫຍ່ຢູ່ຄາລີຟໍເນຍ ສະຫະລັດອາເມຣິກາ ເປັນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລບໍ່ຂຶ້ນກັບສາສະໜາ ແລະ ບໍ່ແມ່ນອົງການຈັດຕັ້ງການເມືອງ ມີເປົ້າຊ່ວຍເຫຼືອຟື້ນຟູສຸຂະພາບຄົນລາວ ໂດຍເນັ້ນໃສ່ຟື້ນຟູສຸຂະພາບເດັກນ້ອຍ ຊ່ວຍເຫຼືອດ້ານສຸຂະພາບ ໂດຍການສະໜອງອາຫານ ສຸຂະອະນາໄມ ສະໜອງນ້ຳສະອາດ ຢາປົວພະຍາດ ການເຝິກອົບຮົມກໍ່ສ້າງບຸກຄະລາກອນ ແລະ ສຸຂະສຶກສາລວມທັງວຽກສົ່ງເສີມສາມັນສຶກສາໄດ້ດຳເນີນຫຼາຍກິດຈະກຳໃນເຂດຊົນນະບົດບ່ອນຫ່າງໄກສອກຫຼີກ ຊ່ວຍເຫຼືອບໍລິການກວດ ແລະ ປິ່ນປົວພະຍາດໃຫ້ປະຊາຊົນລາວ ນັບແຕ່ປີ 2008 ຮອດປັດຈຸບັນມີຜູ້ໄດ້ຮັບການຊ່ວຍເຫຼືອ 46.074 ຄົນ ນອກນີ້ ມູນນິທິ LRF ຍັງມີແຜນຊ່ວຍເຫຼືອຢາອຸປະກອນເຄື່ອງມືໃຫ້ແກ່ໜ່ວຍງານຫູ-ດັງ-ຄໍ ແຂ້ວ ຕາ ແມ່ມານ ແລະ ເດັກນ້ອຍ ຢູ່ໂຮງໝໍແຂວງ ໂຮງໝໍເມືອງ ແລະ ສຸກສາລາຢູ່ແຂວງພາກເໜືອ.